# ການສ້າງເພື່ອອະນາຄົດ

ສະຖານທີ່ຮັບລ້ຽງເດັກກາງວັນແຫ່ງນີ້ກຳລັງຮ່ວມໂຄງການ **Child and Adult Care Food Program** ຫລື **CACFP** ເຊິ່ງເປັນໂຄງການທີ່ໄດ້ຮັບເງິນງົບປະມານຈາກລັດຖະບານກາງ ເພື່ອຈັດຫາອາຫານຊຸດແລະອາຫານວ່າງທີ່ສົມບູນໃຫ້ແກ່ເດັກທີ່ໄດ້ຮັບການລ້ຽງດູແລກາງວັນ.

ທຸກມື້ນີ້ ເດັກຈຳນວນກ **2.6** ລ້ານຄົນປາຍໄດ້ຮ່ວມໂຄງການ **CACFP** ຕາມເຮືອນແລະສະຖານທີ່ຕ່າງໆ ທີ່ຮັບລ້ຽງເດັກກາງວັນທົ່ວປະເທດ. ຜູ້ໃຫ້ການບໍລິການທັງຫລາຍຈະໄດ້ຮັບຄ່າຊົດເຊີຍ ເນື່ອງຈາກໄດ້ໃຫ້ອາຫານທີ່ມີຄຸນຄ່າແລະຖືກຕ້ອງຕາມຂໍ້ກຳໜົດຕ່າງໆ ຂອງ **USDA**. ໂຄງການນີ້ມີບົດບາດສຳຄັນໃນການປັບລະດັບຄຸນນະພາບຂອງການຮັກສາເດັກກາງວັນໃຫ້ສູງຂຶ້ນແລະໃນການອຳນວຍໃຫ້ຄອບຄົວທີ່ມີລາຍໄດ້ຕ່ຳສາມາດໃຊ້ບໍລິການນີ້ໄດ້ຫລາຍຂຶ້ນ.

**ອາຫານຊຸດ** ທັງເຮືອນສ່ວນບຸກຄົນແລະສູນຕ່າງໆ ທີ່ຮ່ວມໂຄງການ **CACFP** ຈະຕ້ອງປະຕິບັດຕາມຂໍ້ກຳໜົດຕ່າງໆ ທີ່ທາງ **USDA** ໄດ້ຕັ້ງໄວ້ສຳຫລັບອາຫານຊຸດ.

| ອາຫານເຊົ້າ | ອາຫານກາງວັນຫລືອາຫານແລງ | ອາຫານວ່າງ (ສອງໃນສີ່ກຸ່ມນີ້) |
|---|---|---|
| ນ້ຳນົມ<br>ໝາກໄມ້ຫລືຜັກ<br>ເຂົ້າຫລືເຂົ້າຈີ່ | ນ້ຳນົມ<br>ຊີ້ນຫລືອາຫານທີ່ແທນຊີ້ນໄດ້<br>ເຂົ້າຫລືເຂົ້າຈີ່<br>ໝາກໄມ້ຫລືຜັກສອງແນວຕ່າງຫາກ | ນ້ຳນົມ<br>ຊີ້ນຫລືອາຫານທີ່ແທນຊີ້ນໄດ້<br>ເຂົ້າຫລືເຂົ້າຈີ່<br>ໝາກໄມ້ຫລືຜັກ |

**ສະຖານທີ່ຕ່າງ ໆ ທີ່ຮ່ວມໂຄງການ** ບັນດາເຮືອນສ່ວນຕົວແລະສູນດຳເນີນການຕາມໂຄງການ **CACFP** ແລະມີວັດຖຸປະສົງອັນດຽວກັນທີ່ຈະມອບອາຫານຊຸດແລະອາຫານວ່າງທີ່ມີຄຸນຄ່າໃຫ້ແກ່ຜູ້ຮ່ວມໂຄງການທັງຫລາຍ. ສະຖານທີ່ຕ່າງໆ ທີ່ຮ່ວມໂຄງການນີ້ຮວມເຖິງ :

- **ສູນຮັບລ້ຽງເດັກ** ແມ່ນສູນຮັບລ້ຽງເດັກຂອງຝ່າຍສາທາລະນະຫລືເອກະຊົນທີ່ບໍ່ສະແວງຫາລາຍໄດ້ແລະຖືໃບອະນຸຍາດຫລືໄດ້ຮັບການອະນຸມັດ, ໂຮງຮຽນອະນຸບານຂອງໂຄງການ **Head Start** ແລະສູນທີ່ສະແວງຫາລາຍໄດ້ບາງບ່ອນ,
- **ເຮືອນທີ່ຮັບລ້ຽງເດັກກາງວັນ** ແມ່ນເຮືອນຂອງຝ່າຍເອກະຊົນທີ່ຖືໃບອະນຸຍາດຫລືໄດ້ຮັບການອະນຸມັດ.
- **ໂຄງການລ້ຽງເດັກຫລັງເວລາຮຽນ** ແມ່ນສູນຕ່າງໆ ທີ່ໃຫ້ອາຫານວ່າງຟຣີແກ່ເດັກໄວຮຽນແລະຍຸວະຊົນພາຍໃນທ້ອງຖິ່ນທີ່ປະຊາຊົນມີລາຍໄດ້ຕ່ຳ,
- **ທີ່ຫລົບໄພສຳຫລັບຜູ້ໄຮ້ທີ່ອາໄສ** ແມ່ນທີ່ພັກສຸກເສີນທີ່ໃຫ້ບໍລິການອາຫານແກ່ເດັກທີ່ໄຮ້ທີ່ອາໄສ.

**ການມີສິດທິ** ໜ່ວຍງານຕ່າງໆ ຂອງລັດຖະຈ່າຍຄ່າຊົດເຊີຍໃຫ້ແກ່ສະຖານທີ່ຕ່າງໆ ທີ່ໃຫ້ການລ້ຽງດູນອກເຮືອນທີ່ອາໄສແກ່ເດັກປະເພດຕໍ່ໄປນີ້ :

- ເດັກທີ່ມີອາຍຸຕັ້ງແຕ່ 12 ປີລົງໄປ,
- ເດັກບ້ານຖິ່ນທີ່ມີອາຍຸຕັ້ງແຕ່ 15 ປີລົງໄປ ແລະ
- ຍຸວະຊົນທີ່ມີອາຍຸສູງເຖິງ 18 ປີໃນໂຄງການຕ່າງໆ ທີ່ໃຫ້ການລ້ຽງດູຫລັງເວລາຮຽນພາຍໃນທ້ອງຖິ່ນຂອງຄົນຍາກຈົນ.

**ຜູ້ທີ່ຄວນຕິດຕໍ່** ໃນການສອບຖາມເລື່ອງໃດໆ ກ່ຽວກັບໂຄງການ **CACFP** ກະລຸນາຕິດຕໍ່ສະຖານທີ່ບ່ອນໃດບ່ອນນຶ່ງຕໍ່ໄປ :

---

Sponsoring Organization

State Director, NYS CACFP
NYS Department of Health
Division of Nutrition
150 Broadway FL 6 West
Albany, NY 12204-2719
1-800-942-3858 (in NY only)
518-402-7400

USDA
USDA ເປັນຜູ້ໃຫ້ບໍລິການແລະຜູ້ວ່າຈ້າງ
ທີ່ໃຫ້ໂອກາດຢ່າງເທົ່າທຽມ